ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ພະລານໄຊ

ຫ້ອງການໂຍທາທິການ ແລະ ຂົນສົ່ງ

ເລກທີ.....14...../ຍທຂ.ພຊ

ເມືອງພະລານໄຊ, ວັນທີ..18..ກຸມພາ.2026

# ຈົດໝາຍເຊີນເຂົ້າຮ່ວມປະມູນ

- ອີງຕາມ ຂໍ້ຕົກລົງຂອງເຈົ້າເມືອງພະລານໄຊ, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ສະບັບເລກທີ 307/ຈມ.ພຊ, ລົງວັນທີ 26 ມິຖຸນາ 2023.
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ, ວ່າດ້ວຍແຈ້ງແຜນການລົງທຶນຂອງລັດປີ2026, ມອບໃຫ້ອົງການປົກຄອງເມືອງເປັນຜູ້ຈັດຕັ້ງປະຕິບັດ, ສະບັບເລກທີ 371/ກງຂ, ລົງວັນທີ 16 ກຸມພາ 2026(ບ້ວງຟື້ນຟູໄພພິບັດ) ບ້ວງປົກກະຕິໂຄງການປະເພດV ມູນຄ່າ 50ຕື້ ລົງມາ (ສູນກາງຈັດສັນ).

ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງພະລານໄຊ, ມີຄວາມຍິນດີເຊີນ ບັນດາບໍລິສັດພາຍໃນແຂວງ ທີ່ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງຂົວ-ທາງ ໃນສົກປີງົບປະມານ, ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໂຄງການກໍ່ສ້າງ ແລະ ສ້ອມແປງຂົວ-ທາງບ້ວງງົບປະມານການລົງທຶນຂອງລັດ, ເຊິ່ງມີໂຄງການດັ່ງນີ້:

1. ໂຄງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງດິນແດງທາງເລກທີ DR 6319 ແຕ່ແຍກທາງເລກ 9 ບ້ານໂພໄຊ ຫາ ບ້ານນາລາຍ ຫາ 3ແຍກທາງເລກ9 ບ້ານຫ້ວຍຫຍ້າພຶດ, ລວງຍາວ: 18ກິໂລແມັດ, ກວ້າງ: 05 ແມັດ, ຂອບເຂດເມືອງ ພະລານໄຊ.

- ທ່ານສາມາດຊື້ເອກະສານປະມູນໄດ້ຢູ່ ຫ້ອງການການເງິນເມືອງ ພະລານໄຊ ໃນລາຄາ 500,000ກີບ/01ຊອງ, ເປີດຂາຍຊອງປະມູນເລີ່ມແຕ່ວັນທີ 20 ກຸມພາ 2026 ຫາ ວັນທີ 19 ມີນາ 2026 (ຕາມໂມງລັດຖະການ), ສຳລັບລາຍລະອຽດເພີ່ມເຕີມ ທ່ານສາມາດພົວພັນໄດ້ຢູ່ຫ້ອງການການເງິນເມືອງ, ເບີໂທ: 020 9136 6955.
- ຄ້ຳປະກັນການປະມູນ ມູນຄ່າຕ່ຳສຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ.
- ຕ້ອງມີໃບທະບຽນຄົບຊຸດເຊັ່ນ: ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດໃນສົກປີງົບປະມານ ແລະ ໃບຢັ້ງຢືນມອບພັນທະອາກອນໃນປີ 2024 - 2025.
- ລົງຢັ້ງຢາມສະໜາມຈະໄດ້ຈັດຂຶ້ນໃນຄັ້ງວັນທີ 20 ມີນາ 2026 ເລີ່ມແຕ່ເວລາ 9:00 ໂມງເປັນຕົ້ນໄປ.
- ກອງປະຊຸມກ່ອນການປະມູນ ຈະໄດ້ຈັດຂຶ້ນໃນ ວັນທີ 23 ມີນາ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຫ້ອງການ ຍທຂ ເມືອງພະລານໄຊ.
- ກຳນົດເປີດຊອງປະມູນ ໃນວັນທີ 30 ມີນາ 2026 ເວລາ 14:00ໂມງ ທຸກໆເອກະສານການປະມູນຈະເປີດຊ້ອງໜ້າຄະນະກຳມະການປະມູນ ແລະ ບໍລິສັດເຂົ້າຮ່ວມ, ຫ້ອງການ ຍທຂ ເມືອງພະລານໄຊ.

ຫົວໜ້າຫ້ອງການ ຍທຂ ເມືອງພະລານໄຊ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງພະລານໄຊ

ສູນທະລາ ວົງສີຊຽງໃໝ່